# ຕັ້ງແມ່ພິມເຂົ້າໃສ່ລະບົບຄອມພິວເຕີ (ອັກສອນ)

# COMMENT INSTALLER DES POLICES LAO

ໂດຍ ຄຳແພວ ພູເພັຊຣ໌ລິນທອງ Par Khamphéo Phouphetlinthong

Avant tout, vous devez savoir comment créer un répertoire (ou un dossier) à l'aide de l'**Explorer** Windows et comment trouver un répertoire. Il est souhaitable de créer un répertoire destiné à déposer uniquement des fontes ou des polices de caractères lao en votre possession. Vous mettez aussi des fontes lao téléchargées dans ce répertoire ou dans un répertoire donné mais il faudrait aussi noter le nom de ce répertoire et également celui du disque C:/ ou D:/ correspondant(Exemple D:/FONTES **lao** ou c:/Laofonts)

ກ່ອນອື່ນຫມົດ ທ່ານຕ້ອງຮູ້ຈັກ ສ້າງເຫງົ້າ (répertoire) ດ້ວຍ Explorer Windows ເສັຽກ່ອນອາດຈະເປັນການດີ ແລະ ທ່ານຕ້ອງຮູ້ຈັກຊອກຫາເຫງົ້າດັ່ງກ່າວຕາມຄວາມຕ້ອງການໄດ້ເຫມືອນກັນ ອີກປະການນຶ່ງ ທ່ານຄວນວາງແມ່ພິມລາວທຸກໆອັນໄວ້ເຫງົ້າບ່ອນດຽວກັນ

ໃນເມື່ອທ່ານສ້າງເຫງົ້າຂຶ້ນມາແລ້ວ ທ່ານຄວນຈຳຊື່ ຫລື ຈື່ຊື່ ແລະ ຈົດຊື່ຂອງມັນໄວ້ໃຫ້ດີ ເພື່ອຄວາມສະດວກໃນການຊອກໃນພາຍຫນ້າ

ວິທີເຣັດໃຫ້ Explorer Windows ເປີດຂຶ້ນມາໄດ້ນັ້ນ ໃຫ້ເຣັດຕາມຂໍ້ນຶ່ງຫາຂໍ້ສາມຂ້າງລຸ່ມນີ້

ເມື່ອວັນທີ ໒໙-໐໔-໒໐໐໗ ເດືອນ ເມສາ ພ.ສ. ໒໕໕໐ ແຫ່ງເມືອງ ປາຣີສ໌ ທີ່ປະເທດຝຣັ່ງ

| ວິທີເອົາແມ່ພິມເຂົ້າໃສ່ລະບົບວິນໂດວ | INSTALLER LES FONTES LAO SUR WINDOWS |
|---|---|
| ໑- ດັກໃສ່ Démarrer ແຈລຸ່ມກ້ຳຊ້າຍ | 1- Pointer sur **Démarrer** au coin inférieur gauche |
| ໒- ດິກໃສ່ຫົວຫນູເບື້ອງຂວາ | 2- Cliquer sur le bouton droit de la souris |
| ໓- ດິກໃສ່ Explorer (ຈະມີຫນ້າຕ່າງເປີດຂຶ້ນ) | 3- Cliquer sur **Explorer** (une interface s'ouvre) |
| ໔- ດຶງບັນໄດເລື່ອນກ້ຳຊ້າຍລົງລຸ່ມສຸດ | 4- Ramener l'ascenseur gauche jusqu'en bas |
| ໕- ດິກໃສ່ Panneau de configuration | 5- Cliquer sur le **Panneau de configuration...** |
| ໖- ດິກໃສ່ Polices | 6- Cliquer sur **Polices** |
| ໗- ດິກໃສ່ Fichier ແຈເທິງກ້ຳຊ້າຍຂອງຫນ້າຕ່າງ | 7- Cliquer sur **Fichier** au coin supérieur gauche |
| ໘- ດິກໃສ່ Installer une nouvelle police... | 8- Cliquer sur **Installer une nouvelle police...** |

ຄຳແພວ ພູເພັຊຣ໌ລິນທອງ Khamphéo Phouphetlinthong

# ຕັ້ງແມ່ພິມເຂົ້າໃສ່ລະບົບຄອມພິວເຕີ (ອັກສອນ)

| | |
|---|---|
| ໙- ໃຫ້ຊອກຫາເຫງົ້າທີ່ທ່ານວາງແມ່ພິມໄວ້ | 9- Trouver le dossier où se trouve vos caractères |
| ໑໐-ໃຫ້ເລືອກເອົາແມ່ພິມທີ່ທ່ານຕ້ອງການຕິດຕັ້ງ | 10- Sélectionner une/des polices souhaitées |
| ໑໑-ດິກໃສ່ **OK** | 11- Cliquer sur le bouton **OK** |
| ໑໒-ດິກໃສ່ດຸມ **Fermer** ເພື່ອປິດຫນ້າຕ່າງ | 12- Cliquer sur le bouton **Fermer** |
| ໑໓-ໃຫ້ມອດຄອມພິວເຕີແລ້ວເປີດໃຫມ່ | 13- Redémarrer votre ordinateur |

http://laocom.free.fr

## ເລຂສັບ (Lexiques)

ຂ້າພະເຈົ້າໄດ້ແປຄໍາສັບຫລາຍໆຄໍາທີ່ມາຈາກເທັກໂນໂລຈີໃຫມ່ ໃຫ້ເປັນພາສາລາວ ແຕ່ບໍ່ໄດ້ຫມາຍຄວາມວ່າຈະໃຫ້ຜູ່ອື່ນຖືເອົາເປັນຫລັກແຕ່ປະການໃດ ຈະຜິດຫລືຖືກກໍຂໍໃຫ້ທ່ານນໍາຄິດໃຊ້ຕາມເຫມະສົມ ເພາະວ່າ ສັບເຫລົ່ານີ້ ບໍ່ເຄີຍໄດ້ໃຊ້ທາງດ້ານນີ້ມາກ່ອນ ຂ້າພະເຈົ້າຈຶ່ງໄດ້ພຍາຍາມແປສັບ ທີ່ຂ້າພະເຈົ້າເຂົ້າໃຈຄວາມຫມາຍຂອງມັນໄດ້ດີອອກມາ ເພື່ອໃຫ້ພວກເກີດໃຫມ່ໃຫຍ່ລຸນສາມາດເກັບກໍາແລະນໍາເອົາຂໍ້ມູນຕ່າງໆເຫລົ່ານີ້ໄປພິຈຣະນາໃນອະນາຄົດຂ້າງຫນ້າ ສະນັ້ນ ການຂຽນທຸກໆຊນິດອັນປະກອບດ້ວຍການອະທິບາຍຄວາມຫມາຍຄໍາສັບຕ່າງໆພ້ອມດ້ວຍການວິເຄາະບາງຢ່າງ ຈະເປັນປໂຍດອັນມະຫາສານສໍາລັບສັງຄົມໄທລາວໂດຍທົ່ວໄປ (ມີ ຄໍານີ້ຈະຖືກໃຊ້ຢູ່ຕລອດ)

ດິກ ກ. To click. Cliquer. ດິກເປັນຄໍາມູນ ຄໍາມູນແມ່ນຄໍາລາວແທ້ທີ່ມີແຕ່ພຍາງດຽວເທົ່ານັ້ນ ຕົວຢ່າງ ຕາຍດິກນໍ້າ ດິກລົງນໍ້າ ແມ່ນອາການທີ່ຕ່າວລົງໄປລຸ່ມ ລົງໄປພື້ນ ລົງໄປໃຕ້ນໍ້າ ເພິ່ນຮ້ອງວ່າ ດິກ

ດັກ ກ. (ມ.) To point. Se pointer, pointer quelque chose, maintenir quelque chose enfoncée. ເນັ້ນໄວ້ ເຊັ່ນ ດັກແຮ້ວ ອັນມີຄວາມຫມາຍວ່າ ທ້າງແຮ້ວ ຄໍາວ່າດັກມີຄວາມຫມາຍຫລາຍຢ່າງ ແຕ່ວ່າຂ້າພະເຈົ້າຂໍໂຈະໄວ້ພຽງເທົ່ານີ້ [(ມ.) ບົ່ງບອກວ່າແມ່ນຄໍາມູນ]

ດົ່ງ ກ. (ມ.) To link. Lier dans le sens de lien. ເນັ່ງສາຍ ແມ່ນເອົາເຊືອກມາເນັ່ງ ແຕ່ວ່າ ດົ່ງ ແມ່ນເນັ່ງສາຍໂດຍບໍ່ຈໍາເປັນຈະໃຊ້ເຊືອກ ເນັ່ງໃນຫົວ ໃນຄວາມຄິດ ອັນມີຄວາມຫມາຍເຫມາະສົມກັບຄໍາຝຣັ່ງອັງກິດວ່າ link ກັບ lien ທີ່ເພິ່ນໃຊ້ກັນໃນເວັບໄຊຕ໌ທຸກວັນນີ້ ຕົວຢ່າງ ດົ່ງໄປໃສ່ ແປວ່າ ແນໄປໃສ່ ແລະ ຫມາກໂຕ້ນດົ່ງ ແມ່ນຂີ້ກົ່ວທີ່ເພິ່ນໃຊ້ວັດແທກ ຄວາມຕຣົງຊື່ຈັດ ຄວາມເລິກ ແຕ່ເປັນຄວາມທ່ຽງທາງເລິກຫລາຍກວ່າ (ຝຣັ່ງອັງກິດວ່າ aplomb) ກ່ອນຈະກໍ່ຝາເຮືອນເພິ່ນວາງຫມາກໂຕ້ນດົ່ງໄວ້ກ່ອນ ເພິ່ນຈຶ່ງກໍ່ເພື່ອໃຫ້ຝາຊື່ດີ [(ມ.) ບົ່ງບອກວ່າແມ່ນຄໍາມູນ]